ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 016 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ສານທະຫານ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ສານທະຫານ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 17 ທັນວາ 2013

**ກອງປະຊຸມໄດ້ຕົກລົງ:**

<u>ມາດຕາ 1.</u> ຮັບຮອງເອົາກົດໝາຍວ່າດ້ວຍ ສານທະຫານ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2.</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 17 ທັນວາ 2013

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 067 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28.01.2014.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍສານທະຫານ

---

- ອີງຕາມ ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 016 / ສພຊ, ລົງວັນທີ 17 ທັນວາ 2013;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 017 /ຄປຈ,ລົງວັນທີ 23/01/2014.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍສານທະຫານ.

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ສະພາແຫ່ງຊາດ

ເລກທີ 38 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ທັນວາ 2013

# ກົດໝາຍ
# ວ່າດ້ວຍ ສານທະຫານ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາ ການຈັດຕັ້ງ, ການເຄື່ອນໄຫວວຽກງານຂອງສານທະຫານ ເພື່ອຮັບປະກັນການປະຕິບັດໜ້າທີ່ໃນການພິຈາລະນາຕັດສິນ ແລະ ພິພາກສາຄະດີອາຍາ ໃຫ້ມີຄວາມຖືກຕ້ອງ, ພາວະວິໄສ, ໂປ່ງໃສ, ຍຸຕິທຳ ແລະ ມີຄຸນນະພາບ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຄູ່ຄວາມ, ຂອງກອງທັບ ຮັບປະກັນໃຫ້ກອງທັບມີລະບຽບວິໄນເຂັ້ມງວດ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### ມາດຕາ 2 ສານທະຫານ

ສານທະຫານ ແມ່ນ ອົງການພິພາກສາໜຶ່ງ ໃນລະບົບສານປະຊາຊົນ ແຫ່ງ ສປປ ລາວ ທີ່ສ້າງຕັ້ງຂຶ້ນໃນກອງທັບປະຊາຊົນລາວ, ມີພາລະບົດບາດດຳເນີນການຕັດສິນ ແລະ ພິພາກສາຄະດີອາຍາ ກ່ຽວກັບການກະທຳຜິດທີ່ເກີດຂຶ້ນ ໃນຂົງເຂດຄວາມຮັບຜິດຊອບວຽກງານຮອບດ້ານຂອງທະຫານ, ໃນກຳລັງປະກອບອາວຸດປ້ອງກັນຊາດ, ຕໍ່ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ແລະ ຕໍ່ບຸກຄົນນອກກອງທັບ ໃນຂອບເຂດຍຸດທະສາດການທະຫານ ແລະ ຂອບເຂດຕັ້ງທັບຂອງທະຫານ.

**ມາດຕາ 3 ຄະດີທີ່ນຳມາພິຈາລະນາຢູ່ສານທະຫານ**

ຄະດີທີ່ນຳມາພິຈາລະນາຢູ່ສານທະຫານ ມີ ດັ່ງນີ້:

1. ຄະດີທີ່ພົວພັນເຖິງການກະທຳຜິດທາງອາຍາ ຂອງນາຍ ແລະ ພົນທະຫານ, ກຳມະກອນ ແລະ ພາລະກອນປ້ອງກັນຊາດ;

2. ຄະດີທີ່ພົວພັນເຖິງການກະທຳຜິດທາງອາຍາ ຂອງກຳລັງສຳຮອງ, ກຳລັງປ້ອງກັນຕົວ, ກອງຫຼອນ ແລະ ຂອງບຸກຄົນທີ່ພວມເຮັດໜ້າທີ່ໃນໄລຍະອົບຮົມ, ທັດແອບ, ກຽມພ້ອມສູ້ຮົບ, ເຄື່ອນໄຫວສູ້ຮົບ ຫຼື ລາດຕະເວນ ຊຶ່ງກອງທັບເປັນຜູ້ຄຸ້ມຄອງໂດຍກົງ;

3. ຄະດີທີ່ພົວພັນເຖິງການກະທຳຜິດທາງອາຍາ ຂອງບຸກຄົນນອກກອງທັບ ທີ່ກໍ່ຄວາມເສຍຫາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມລັບທາງການທະຫານ ແລະ ຕໍ່ຜົນປະໂຫຍດຂອງກອງທັບ, ຊີວິດ, ຊັບສິນ, ສຸຂະພາບ ຫຼື ກຽດສັກສີ ຂອງນາຍ ແລະ ພົນທະຫານ.

**ມາດຕາ 4 ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ຄຳຕົກລົງຂອງສານ** ໝາຍເຖິງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ;

2. **ຄຳສັ່ງຂອງສານ** ໝາຍເຖິງ ຄຳຕົກລົງປະເພດໜຶ່ງຂອງສານ ກ່ຽວກັບການດຳເນີນຄະດີ ເຊັ່ນ ຄຳສັ່ງຍຶດຊັບ ຫຼື ອາຍັດຊັບ, ຄຳສັ່ງຊັດມ້ຽນຄະດີ, ຄຳສັ່ງຈັບຕົວ ແລະ ອື່ນໆ;

3. **ຄຳຊີ້ຂາດຂອງສານ** ໝາຍເຖິງ ຄຳຕົກລົງປະເພດໜຶ່ງຂອງສານ ກ່ຽວກັບການຊີ້ຂາດສິດອຳນາດຂອງສານ, ຂອງຄະນະສານ, ການບໍ່ຮັບເອົາຄະດີມາພິຈາລະນາ, ຄຳຕັດສິນປະຫານຊີວິດ ແລະ ອື່ນໆ;

4. **ຄຳຕັດສິນຂອງສານ** ໝາຍເຖິງ ຄຳຕັດສິນຂອງສານຂັ້ນຕົ້ນ;

5. **ຄຳພິພາກສາຂອງສານ** ໝາຍເຖິງ ຄຳຕັດສິນຂອງສານຂັ້ນອຸທອນ ຫຼື ຂັ້ນລົບລ້າງ;

6. **ຄູ່ຄວາມ ໝາຍເຖິງ** ໂຈດ ແລະ ຈຳເລີຍ ໃນຄະດີ;

7. **ທະນາຍຄວາມ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງ ໃຫ້ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມຕາມລະບຽບກົດໝາຍ;

8. **ຜູ້ປົກປ້ອງອື່ນ** ໝາຍເຖິງ ຜູ້ຕາງໜ້າອົງການຈັດຕັ້ງ, ຜົວ ຫຼື ເມັຍ, ພໍ່ແມ່, ຜູ້ປົກຄອງ ຫຼື ຍາດໃກ້ຊິດ ທີ່ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຖືກຫາ ຫຼື ຈຳເລີຍ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ;

9. **ຈຳເລີຍ** ໝາຍເຖິງ ຜູ້ຖືກສັ່ງຟ້ອງຂຶ້ນສານ;

10. **ຜູ້ຖືກຫາ** ໝາຍເຖິງ ບຸກຄົນທີ່ນຳມາດຳເນີນຄະດີ ພາຍຫຼັງມີຄຳສັ່ງເປີດການສືບສວນ-ສອບສວນ;

11. **ຜູ້ກະທຳຜິດ** ໝາຍເຖິງ ຜູ້ຖືກສານຕັດສິນລົງໂທດ;

12. **ພະນັກງານສານທະຫານ** ໝາຍເຖິງ ປະທານ, ຮອງປະທານ, ຜູ້ພິພາກສາ, ຜູ້ຊ່ວຍ ຜູ້ພິພາກສາ, ຈ່າສານ, ພະນັກງານວິຊາການ ແລະ ພະນັກງານບໍລິຫານ ຂອງສານທະຫານ;

13. **ພຶດຕິກຳ** ໝາຍເຖິງ ການກະທຳ ຫຼື ການເມີນເສີຍ;

14. **ໝາຍຮຽກຂອງສານ** ໝາຍເຖິງ ໜັງສືທີ່ອອກໂດຍສານ ເພື່ອຮຽກຕົວໂຈດ, ຈຳເລີຍ, ບຸກຄົນທີສາມ, ພະຍານ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ ເຂົ້າມາສານ ຕາມວັນ ເວລາ ແລະ ສະຖານທີ່ ຊຶ່ງໄດ້ກຳນົດໄວ້ໃນໝາຍຮຽກ;

15. **ຍຸຕິທຳ** ໝາຍເຖິງ ຄວາມຖືກຕ້ອງ, ເປັນທຳທາງດ້ານກົດໝາຍ;

16. **ຜູ້ພິພາກສາ** ໝາຍເຖິງ ຜູ້ທີ່ມີມາດຕະຖານ ແລະ ໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດ ໃຫ້ມີສິດພິຈາລະນາຕັດສິນຄະດີ;

17. **ປະເພນີສານ** ໝາຍເຖິງ ຄຳພິພາກສາຂອງສານປະຊາຊົນສູງສຸດ ກ່ຽວກັບບັນຫາໃດໜຶ່ງ ໃນຄະດີອາຍາ ຊຶ່ງກົດໝາຍ ກຳນົດໄວ້ບໍ່ຊັດເຈນ, ບໍ່ໄດ້ກຳນົດ ຫຼື ໄດ້ກຳນົດໄວ້ ແຕ່ບໍ່ຈະແຈ້ງ ເພື່ອເປັນບ່ອນອີງໃຫ້ສານປະຊາຊົນ ແລະ ສານທະຫານ ທຸກຂັ້ນ ໄດ້ປະຕິບັດຕາມ;

18. **ບຸກຄົນນອກກອງທັບ** ໝາຍເຖິງ ປະຊາຊົນ ພົນລະເມືອງລາວ ທີ່ບໍ່ນອນໃນການຈັດຕັ້ງຂອງກອງທັບ;

19. **ຈ່າສານ** ໝາຍເຖິງ ພະນັກງານທີ່ໄດ້ຮັບການແຕ່ງຕັ້ງໃຫ້ເຮັດວຽກຊ່ວຍຄະນະສານ ໃນການປະກອບ ແລະ ຄຸ້ມຄອງສຳນວນຄະດີ, ບັນທຶກຄຳໃຫ້ການ, ກະກຽມ ແລະ ບັນທຶກປຶ້ມປະຊຸມສານ ແລະ ວຽກງານອື່ນ ຕາມການມອບໝາຍຂອງຄະນະສານ;

20. **ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ** ໝາຍເຖິງ ຄຳຕັດສິນ, ຄຳພິພາກສາຂອງສານທະຫານ ຊຶ່ງໂຈດ, ຈຳເລີຍ ບໍ່ໄດ້ຂໍອຸທອນ, ຂໍລົບລ້າງ ຫຼື ໄອຍະການທະຫານ ບໍ່ໄດ້ສະເໜີຄັດຄ້ານ ແລະ ຄຳພິພາກສາຂອງສານປະຊາຊົນສູງສຸດ;

21. **ນິຕິທຳ** ໝາຍເຖິງ ການເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງຖືກຕ້ອງ ແລະ ເຂັ້ມງວດ;

22. **ນາຍທະຫານ** ໝາຍເຖິງ ຜູ້ທີ່ມີຊັ້ນແຕ່ ຊັ້ນຮ້ອຍຕີ ເຖິງ ຊັ້ນພົນເອກ;

23. **ພົນທະຫານ** ໝາຍເຖິງ ຜູ້ທີ່ມີຊັ້ນແຕ່ ຊັ້ນສອງ ເຖິງ ຊັ້ນວ່າທີ່ຮ້ອຍຕີ;

24. **ກຳລັງສຳຮອງ** ໝາຍເຖິງ ກຳລັງທີ່ບໍ່ປະຈຳການໃນກອງທັບ ໃນຍາມສັນຕິພາບ ຊຶ່ງນອນໃນແຜນການຈັດຕັ້ງປະກອບ ຂອງກອງທັບປະຊາຊົນລາວ, ໃນຍາມສຸກເສີນ ປະຕິບັດໜ້າທີ່ເປັນກອງໜູນ ໃຫ້ແກ່ກຳລັງປະຈຳການໃນກອງທັບ ເມື່ອມີຄວາມຕ້ອງການ;

25. **ກອງຫຼອນ** ໝາຍເຖິງ ກຳລັງປ້ອງກັນຊາດ ຂັ້ນບ້ານ ຊຶ່ງປະຕິບັດໜ້າທີ່ປ້ອງກັນບ້ານ ຫຼື ປະສານສົມທົບກັບກຳລັງອື່ນ ເພື່ອປ້ອງກັນຂອບເຂດໃດໜຶ່ງ ຕາມການມອບໝາຍ;

26. **ກຳລັງປ້ອງກັນຕົວ** ໝາຍເຖິງ ພະນັກງານ, ກຳມະກອນ ທີ່ໄດ້ປະກອບອາວຸດ ຈັດຕັ້ງຂຶ້ນຢູ່ໂຮງຈັກໂຮງງານ, ມີໜ້າທີ່ຮັກສາຄວາມສະຫງົບ, ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນຂອບເຂດທີ່ຕັ້ງຂອງຕົນ;

27. **ກຳມະກອນປ້ອງກັນຊາດ** ໝາຍເຖິງ ບຸກຄົນທີ່ເຮັດວຽກຢູ່ໂຮງຈັກໂຮງງານຂອງກອງທັບ;

28. **ພາລະກອນປ້ອງກັນຊາດ** ໝາຍເຖິງ ບຸກຄົນທີ່ຖືກລະດົມເຂົ້າມາຮັບໃຊ້ໃນກອງທັບ;

29. **ຄະນະສານທະຫານເຄື່ອນທີ່** ໝາຍເຖິງ ຄະນະສານອາຍາ ທີ່ໄປຕັດສິນ ຫຼື ພິພາກສາຄະດີ ຢູ່ບ່ອນທີ່ຄະດີນັ້ນເກີດຂຶ້ນ ຫຼື ບ່ອນທີ່ຈຳເລີຍຖືກກັກຂັງ;

30. **ກຳລັງປະກອບອາວຸດປ້ອງກັນຊາດ** ໝາຍເຖິງ ການຈັດຕັ້ງທີ່ດຳເນີນການຕໍ່ສູ້ດ້ວຍອາວຸດ ຕໍ່ສັດຕູ ໂດຍແມ່ນລັດເປັນຜູ້ຊີ້ນຳນຳພາ-ບັນຊາ ແລະ ຄຸ້ມຄອງໂດຍກົງ: ກຳລັງຫຼວງ, ກຳລັງທ້ອງຖິ່ນ, ກອງຫຼອນ ແລະ ກອງປ້ອງກັນຕົວ;

31. **ລາດຕະເວນ** ໝາຍເຖິງ ການເຄື່ອນໄຫວ ປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນຂອບເຂດໃດໜຶ່ງ;

32. **ເຂດຍຸດທະສາດການທະຫານ** ໝາຍເຖິງ ຂອບເຂດພື້ນທີ່ພູມີປະເທດ ພູຜາປ່າດົງ, ພູພຽງ, ຖໍ້າ, ຫ້ວຍນໍ້າລຳເຊ ທີ່ມີຄຸນຄ່າທາງການທະຫານ, ເປັນເຂດຕ້ອງໄດ້ສະຫງວນຢ່າງເດັດຂາດ ເພື່ອນຳໃຊ້ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

### ມາດຕາ 5 ນະໂຍບາຍຂອງລັດກ່ຽວກັບວຽກງານສານທະຫານ

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກ ໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ຂອງສານທະຫານ ດ້ວຍການສະໜອງງົບປະມານ, ການປະກອບບຸກຄະລາກອນ, ພາຫະນະ ແລະ ສ້າງພື້ນຖານໂຄງລ່າງໃຫ້ເໝາະສົມ ເພື່ອຮັບປະກັນໃຫ້ການພິຈາລະນາຕັດສິນ ຫຼື ພິພາກສາຄະດີ ມີຄວາມວ່ອງໄວ, ປອດໃສ, ຖືກຕ້ອງ ແລະ ຮັບປະກັນຄວາມຍຸຕິທຳໃນສັງຄົມ.

ລັດ ເອົາໃຈໃສ່ໂຄສະນາ, ສຶກສາອົບຮົມກົດໝາຍ ໃຫ້ ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ຮັບຮູ້, ເຂົ້າໃຈ ແລະ ເຂົ້າເຖິງຂະບວນການຍຸຕິທຳ ພ້ອມທັງຊຸກຍູ້ ສົ່ງເສີມໃຫ້ມີຄະນະສານທະຫານເຄື່ອນທີ່.

### ມາດຕາ 6 ຂັ້ນການພິຈາລະນາຕັດສິນຄະດີອາຍາຂອງສານທະຫານ

ການພິຈາລະນາຕັດສິນຂອງສານທະຫານ ມີ ສອງຂັ້ນ ຄື:

- ຂັ້ນຕົ້ນ;
- ຂັ້ນອຸທອນ.

ສານທະຫານພາກ ຕັດສິນເປັນຂັ້ນຕົ້ນ ຕາມຂໍ້ມູນຫຼັກຖານ ແລະ ກົດໝາຍ.

ສານທະຫານຂັ້ນສູງ ພິພາກສາເປັນຂັ້ນອຸທອນ ຕາມຂໍ້ມູນຫຼັກຖານ ແລະ ກົດໝາຍ ກ່ຽວກັບຄະດີອາຍາ ທີ່ສານທະຫານພາກໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການທະຫານ.

### ມາດຕາ 7 ການປົກປ້ອງ

ຜູ້ພິພາກສາ, ພະນັກງານສານທະຫານ ລວມທັງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ໄດ້ຮັບການປົກປ້ອງ ຕາມລະບຽບກົດໝາຍ ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດສັກສີ, ຊື່ສຽງ, ຊັບສິນສ່ວນຕົວ ຫຼື ຄອບຄົວ.

ຜູ້ພິພາກສາຂອງສານທະຫານ ຈະຖືກຈັບຕົວ ຫຼື ດຳເນີນຄະດີໄດ້ ກໍຕໍ່ເມື່ອຫາກໄດ້ຮັບຄວາມເຫັນດີ ຈາກຄະນະປະຈຳສະພາແຫ່ງຊາດ ເສຍກ່ອນ.

ໃນກໍລະນີທີ່ຈຳເປັນ ຫາກໄດ້ຈັບຕົວຜູ້ພິພາກສາຂອງສານທະຫານຢ່າງຮີບດ່ວນແລ້ວ ຕ້ອງລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດໃນທັນທີ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ, ພ້ອມກັນນັ້ນປະທານສານທະຫານຂັ້ນສູງ ຕ້ອງລາຍງານໃຫ້ສານປະຊາຊົນສູງສຸດ ແລະ ກະຊວງປ້ອງກັນປະເທດ.

### ມາດຕາ 8 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບສານທະຫານ ເທົ່ານັ້ນ ແລະ ການພິຈາລະນາຕັດສິນຄະດີອາຍາຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ຂອງກົດໝາຍສະບັບນີ້.

### ມາດຕາ 9 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສານທະຫານ ເປັນຕົ້ນ ການຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາ, ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ເພື່ອພັດທະນາວຽກງານສານທະຫານ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ ລວມທັງປະຕິບັດ ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ຫຼັກການພື້ນຖານໃນການດຳເນີນຄະດີຢູ່ສານທະຫານ

### ມາດຕາ 10 ຫຼັກການພື້ນຖານໃນການດຳເນີນຄະດີຢູ່ສານທະຫານ

ການດຳເນີນຄະດີອາຍາ ຢູ່ສານທະຫານ ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດກົດໝາຍ ໃນການພິຈາລະນາຄະດີ;
2. ຮັບປະກັນຄວາມສະເໝີພາບ ຕໍ່ໜ້າກົດໝາຍ ແລະ ສານທະຫານ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
3. ຮັບປະກັນສິດ ໃນການຕໍ່ສູ້ຄະດີ ຂອງຜູ້ຖືກດຳເນີນຄະດີຢູ່ສານທະຫານ;
4. ຮັບປະກັນຄວາມເປັນເອກະລາດ ຂອງຄະນະສານໃນການພິຈາລະນາຕັດສິນຄະດີ;
5. ຮັບປະກັນການພິຈາລະນາຄະດີເປັນໝູ່ຄະນະ;

6. ໃຊ້ພາສາລາວໃນການດຳເນີນຄະດີ;
7. ຮັບປະກັນການພິຈາລະນາຄະດີຢູ່ທີ່ປະຊຸມສານ ຢ່າງເປີດເຜີຍ;
8. ເຄົາລົບ ແລະ ຈັດຕັ້ງປະຕິບັດຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດ ຂອງສານຢ່າງເຂັ້ມງວດ.

**ມາດຕາ 11 ການເຄົາລົບ ແລະ ປະຕິບັດກົດໝາຍໃນການພິຈາລະນາຄະດີ**

ໃນການພິຈາລະນາຕັດສິນຄະດີ ສານທະຫານ ຕ້ອງອີງໃສ່ຫຼັກຖານ ແລະ ປະຕິບັດຕາມກົດໝາຍອາຍາ, ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ແຫ່ງ ສປປ ລາວ.

ສານທະຫານ ຈະນຳເອົາການກະທຳໃດໜຶ່ງມາຕັດສິນລົງໂທດທາງອາຍາບໍ່ໄດ້ ຖ້າຫາກການກະທຳນັ້ນ ບໍ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ.

**ມາດຕາ 12 ຄວາມສະເໝີພາບ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ**

ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ຢູ່ ສານທະຫານ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສານທະຫານ ໂດຍບໍ່ຈຳແນກເຜົ່າ, ເພດ, ເຊື້ອຊາດ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຊັ້ນ, ຕຳແໜ່ງ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ.

ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ, ກຳລັງສຳຮອງ, ກຳລັງປ້ອງກັນຕົວ, ກອງຫຼອນ, ພົນລະເມືອງລາວ, ມີສິດຮ້ອງຟ້ອງຕໍ່ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ ຫຼື ອົງການໄອຍະການທະຫານ ເມື່ອມີການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້ ແລະ ມີການລະເມີດກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ.

**ມາດຕາ 13 ສິດໃນການຕໍ່ສູ້ຄະດີ**

ຜູ້ຖືກດຳເນີນຄະດີ ເປັນຕົ້ນ ຜູ້ຖືກຫາ ຫຼື ຈຳເລີຍ ໃນຄະດີອາຍາ ມີສິດຕໍ່ສູ້ຄະດີດ້ວຍຕົນເອງ ຫຼື ເອົາທະນາຍຄວາມ, ຜູ້ປົກປ້ອງອື່ນ ຊ່ວຍເຫຼືອທາງດ້ານກົດໝາຍຕໍ່ສູ້ຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

ລະບຽບການເຂົ້າຮ່ວມຂອງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ໃນການດຳເນີນຄະດີ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ.

**ມາດຕາ 14 ຄວາມເປັນເອກະລາດຂອງຄະນະສານ**

ໃນການໄຕ່ສວນ ແລະ ພິຈາລະນາຕັດສິນຄະດີນັ້ນ ຄະນະສານທະຫານ ມີຄວາມເປັນເອກະລາດ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ.

**ມາດຕາ 15 ການພິຈາລະນາຄະດີເປັນໝູ່ຄະນະ**

ຄະນະສານຕັດສິນຄະດີຂອງສານທະຫານຂັ້ນສູງ, ສານທະຫານພາກ ປະກອບດ້ວຍຜູ້ພິພາກສາສາມຄົນ ໃນນັ້ນຜູ້ໜຶ່ງເປັນປະທານ ແລະ ອີກສອງຄົນເປັນຄະນະ.

ຄຳຕົກລົງຂອງຄະນະສານ ຕ້ອງຖືເອົາຕາມສຽງສ່ວນຫຼາຍ.

ການພິຈາລະນາຕັດສິນຄະດີ ຕ້ອງຮັບປະກັນຄວາມລັບ.

**ມາດຕາ 16 ພາສາທີ່ໃຊ້ໃນການດຳເນີນຄະດີ**

ໃນການດຳເນີນຄະດີ ໃຫ້ໃຊ້ພາສາລາວ, ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ທີ່ບໍ່ຮູ້ພາສາລາວ ມີສິດໃຊ້ພາສາຕົນເອງ ຫຼື ພາສາອື່ນ ໂດຍຜ່ານຜູ້ແປພາສາ.

**ມາດຕາ 17 ການພິຈາລະນາຄະດີ ຢູ່ທີ່ປະຊຸມສານຢ່າງເປີດເຜີຍ**

ການພິຈາລະນາຄະດີ ຢູ່ທີ່ປະຊຸມສານ ຕ້ອງດຳເນີນຢ່າງເປີດເຜີຍ ເວັ້ນເສຍແຕ່ກໍລະນີທີ່ຄະດີພາກງ່ຽວຂ້ອງກັບຄວາມລັບຂອງລັດ, ຄວາມລັບທາງການທະຫານ ຕ້ອງດຳເນີນຢ່າງປິດລັບ.

ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານທະຫານ ຕ້ອງອ່ານຢ່າງເປີດເຜີຍ.

**ມາດຕາ 18 ຜົນບັງຄັບປະຕິບັດຄຳຕົກລົງ ຂອງສານທະຫານ**

ສານທະຫານ ອອກຄຳຕົກລົງໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທະຫານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ກົມກອງ, ວິສາຫະກິດ, ນາຍ ແລະ ພົນທະຫານ, ພົນລະເມືອງທຸກຄົນຕ້ອງເຄົາລົບ, ບຸກຄົນ ແລະ ອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງ ຕ້ອງປະຕິບັດຢ່າງເຂັ້ມງວດ.

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທະຫານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ມີຜົນບັງຄັບປະຕິບັດ ແລະ ບໍ່ສາມາດປ່ຽນແປງໄດ້ແຕ່ຢ່າງໃດ ເວັ້ນເສຍແຕ່ກໍລະນີພິເສດເປັນຕົ້ນ ມີຫຼັກຖານໃໝ່ ຈຶ່ງມີສິດສະເໜີຮື້ຟື້ນຄະດີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ III
## ການຈັດຕັ້ງສານທະຫານ
### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສານທະຫານ

**ມາດຕາ 19 ທີ່ຕັ້ງ ແລະ ພາລະບົດບາດ ຂອງສານທະຫານ**

ສານທະຫານ ແມ່ນ ອົງການພິພາກສາໜຶ່ງ ໃນລະບົບສານປະຊາຊົນ ແຫ່ງ ສປປ ລາວ, ມີພາລະບົດບາດ ໃນການພິຈາລະນາຕັດສິນ ຫຼື ພິພາກສາຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້ ເພື່ອຮັບປະກັນຄວາມຍຸຕິທຳ, ຈຳກັດ ແລະ ສະກັດກັ້ນການລະເມີດລະບຽບກົດໝາຍ, ແນໃສ່ປົກປັກຮັກສາລະບອບການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມູນເຊື້ອ, ລະບຽບວິໄນ ແລະ ກຳລັງແຮງສູ້ຮົບຂອງກອງທັບ, ປົກປັກຮັກ

ສາສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ, ກຳລັງສຳຮອງ, ກຳລັງປ້ອງກັນຕົວ, ກອງຫຼອນ ແລະ ພົນລະເມືອງ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງສານທະຫານ**

ສານທະຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມ, ໄກ່ເກັ່ຍຄູ່ຄວາມ ແລະ ພິຈາລະນາຕັດສິນ ຫຼື ພິພາກສາຄະດີອາຍາ;
2. ໂຄສະນາ ເຜີຍແຜ່ກົດໝາຍ ເພື່ອໃຫ້ກຳລັງປະກອບອາວຸດປ້ອງກັນຊາດ ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ;
3. ຊອກຫາ, ກຳຈັດສາເຫດ ແລະ ເງື່ອນໄຂທີ່ພາໃຫ້ມີການກະທຳຜິດເກີດຂຶ້ນ;
4. ປະສານສົມທົບກັບອົງການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ;
5. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຍຸຕິທຳ ແລະ ກົດໝາຍໃນຂົງເຂດວຽກງານຂອງກອງທັບ ເປັນຕົ້ນ ວຽກງານສານທະຫານ ຕາມການມອບໝາຍ ຂອງຂັ້ນເທິງ;
6. ຊີ້ແຈງ, ອະທິບາຍ ຫຼື ຕອບແກ້ຂໍ້ຂ້ອງໃຈ ຂອງສັງຄົມ, ປະຊາຊົນ, ນາຍ ແລະ ພົນທະຫານ ທີ່ພົວພັນກັບວຽກງານຂອງຕົນ;
7. ເຊັນຢັ້ງຢືນບົດບັນທຶກຕ່າງໆ ທີ່ຜູ່ພິພາກສາໄດ້ດຳເນີນ ໂດຍມອບໃຫ້ຫົວໜ້າຄະນະສານອາຍາ ເປັນຜູ່ຮັບຜິດຊອບ;
8. ສະຫຼຸບ ລາຍງານການເຄື່ອນໄຫວ ປະຕິບັດໜ້າທີ່ວຽກງານຂອງຕົນຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ລະບົບການຈັດຕັ້ງຂອງສານທະຫານ

**ມາດຕາ 21 ລະບົບການຈັດຕັ້ງຂອງສານທະຫານ**

ລະບົບການຈັດຕັ້ງຂອງສານທະຫານ ປະກອບດ້ວຍ:

1. ສານທະຫານຂັ້ນສູງ;
2. ສານທະຫານພາກ.

**ມາດຕາ 22 ສານທະຫານຂັ້ນສູງ**

ສານທະຫານຂັ້ນສູງ ແມ່ນ ອົງການພິພາກສາສູງສຸດ ຂອງກອງທັບປະຊາຊົນລາວ, ມີພາລະບົດບາດໃນການພິພາກສາຄະດີອາຍາ ເປັນຂັ້ນອຸທອນ, ຄຸ້ມຄອງ ທາງດ້ານການຈັດຕັ້ງ, ບໍລິຫານ, ກວດກາ

ທາງດ້ານວິຊາສະເພາະ, ຊີ້ນຳການເຄື່ອນໄຫວ, ການປະຕິບັດໜ້າທີ່ຂອງສານທະຫານພາກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສານທະຫານຂັ້ນສູງ ຕັ້ງຢູ່ນະຄອນຫຼວງວຽງຈັນ ມີຊື່ຫຍໍ້ວ່າ: ສທສ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງສານທະຫານຂັ້ນສູງ**

ສານທະຫານຂັ້ນສູງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາເປັນຂັ້ນອຸທອນ ຄະດີອາຍາທີ່ສານທະຫານພາກ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຄູ່ຄວາມໄດ້ຂໍອຸທອນ ຫຼື ໄອຍະການທະຫານໄດ້ສະເໜີຄັດຄ້ານ;

2. ພິຈາລະນາເປັນຂັ້ນອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕົກລົງອື່ນ ຂອງສານທະຫານພາກ ຊຶ່ງຄູ່ຄວາມ ໄດ້ຂໍອຸທອນ ຫຼື ໄອຍະການທະຫານໄດ້ສະເໜີຄັດຄ້ານ;

3. ອອກຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕົກລົງອື່ນ;

4. ຊີ້ນຳສານທະຫານພາກ ທາງດ້ານການຈັດຕັ້ງ ແລະ ດ້ານບໍລິຫານ;

5. ວາງມາດຕະການອັນຈຳເປັນ ກ່ຽວກັບບັນຫາການຈັດຕັ້ງ, ການປັບປຸງ ແລະ ການບໍລິຫານ ສານທະຫານ;

6. ກວດກາ ການປະຕິບັດໜ້າທີ່ວຽກງານຂອງສານທະຫານທຸກຂັ້ນ;

7. ຜັນຂະຫຍາຍຄຳແນະນຳທາງດ້ານກົດໝາຍ, ມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ໃຫ້ສານທະຫານພາກ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຄວາມເປັນເອກະພາບ ໃນການປະຕິບັດກົດໝາຍ;

8. ສົ່ງຄຳສັ່ງ, ຄຳຊີ້ຂາດ, ຄຳພິພາກສາ ໃຫ້ໄອຍະການທະຫານຂັ້ນຂອງຕົນ ແລະ ສານປະຊາຊົນສູງສຸດເພື່ອກວດກາ;

9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຍຸຕິທຳ ແລະ ກົດໝາຍຕາມການມອບໝາຍຂອງຂັ້ນເທິງ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນຕໍ່ສານປະຊາຊົນສູງສຸດ ແລະ ກະຊວງປ້ອງກັນປະເທດ ຢ່າງເປັນປົກກະຕິ;

11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 24 ສານທະຫານພາກ**

ສານທະຫານພາກ ແມ່ນ ສານໜຶ່ງ ໃນລະບົບການຈັດຕັ້ງຂອງສານທະຫານ, ມີພາລະບົດບາດດຳເນີນການຕັດສິນຄະດີອາຍາ ເປັນຂັ້ນຕົ້ນ.

ສານທະຫານພາກເໜືອ ຕັ້ງຢູ່ ແຂວງຫຼວງພະບາງ ມີຊື່ຫຍໍ້ວ່າ: ສທພໜ.

ສານທະຫານພາກກາງ ຕັ້ງຢູ່ ນະຄອນຫຼວງວຽງຈັນ ມີຊື່ຫຍໍ້ວ່າ: ສທພກ.

ສານທະຫານພາກໃຕ້ ຕັ້ງຢູ່ ແຂວງຈຳປາສັກ ມີຊື່ຫຍໍ້ວ່າ: ສທພຕ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງສານທະຫານພາກ**

ສານທະຫານພາກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາຕັດສິນຄະດີອາຍາ ເປັນຂັ້ນຕົ້ນ;
2. ອອກຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕົກລົງອື່ນ;
3. ຈັດຕັ້ງປະຕິບັດຄຳແນະນຳ ທາງດ້ານກົດໝາຍ, ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ແລະ ປະຕິບັດຄຳແນະນຳ ຂອງສານທະຫານຂັ້ນສູງ ເພື່ອຮັບປະກັນ ຄວາມຖືກຕ້ອງ ແລະ ຄວາມເປັນເອກະພາບ ໃນການປະຕິບັດກົດໝາຍ;
4. ຄົ້ນຄວ້າ ສັງລວມ ການຈັດຕັ້ງປະຕິບັດໜ້າທີ່ ແລະ ເກັບກຳສະຖິຕິຄະດີຂອງສານ;
5. ສົ່ງຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນ ໃຫ້ສານທະຫານຂັ້ນສູງ ແລະ ອົງການໄອຍະການທະຫານພາກ ເພື່ອກວດກາ;
6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວການປະຕິບັດໜ້າທີ່ຂອງຕົນ ຕໍ່ສານທະຫານຂັ້ນສູງ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງສານທະຫານ

**ມາດຕາ 26 ໂຄງປະກອບການຈັດຕັ້ງ**

ເພື່ອຮັບປະກັນ ການປະຕິບັດໜ້າທີ່ ແລະ ການເຄື່ອນໄຫວວຽກງານຂອງຕົນ ສານທະຫານຂັ້ນສູງ ແລະ ສານທະຫານພາກ ມີ ຄະນະປະທານ, ຄະນະສານອາຍາ ແລະ ກົງຈັກບໍລິຫານ.

**ມາດຕາ 27 ຄະນະປະທານ**

ຄະນະປະທານ ແມ່ນ ຄະນະນຳ ຂອງສານທະຫານຂັ້ນສູງ ຊຶ່ງປະກອບດ້ວຍ ປະທານ, ຮອງປະທານ, ຫົວໜ້າຄະນະສານອາຍາ ແລະ ຜູ້ພິພາກສາ ຈຳນວນໜຶ່ງ ຂອງສານທະຫານຂັ້ນສູງ.

ຄະນະປະທານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຮ່າງກົດໝາຍ ແລະ ຮ່າງນິຕິກຳອື່ນ ຂອງສານທະຫານ;
2. ຄົ້ນຄວ້າຮ່າງຄຳແນະນຳ ຂອງສານທະຫານຂັ້ນສູງ ກ່ຽວກັບການປະຕິບັດກົດໝາຍ ແລະ ການດຳເນີນຄະດີ ຂອງສານທະຫານ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນກຳລັງປະກອບອາວຸດປ້ອງກັນຊາດ;
3. ປະຕິບັດຄຳແນະນຳ ແລະ ປະເພນີສານ ຂອງສານປະຊາຊົນສູງສຸດ;
4. ຄົ້ນຄວ້າ ກ່ຽວກັບຄຳຕັດສິນປະຫານຊີວິດຂອງສານທະຫານ ເພື່ອສະເໜີໃຫ້ປະທານສານປະຊາຊົນສູງສຸດ ອອກຄຳຊີ້ຂາດ;

5. ຄົ້ນຄວ້າ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານສານທະຫານຂັ້ນສູງ ເພື່ອໃຫ້ປະທານສານປະຊາຊົນສູງສຸດ ສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

6. ຄົ້ນຄວ້າ ນຳສະເໜີກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານສານທະຫານພາກ ແລະ ຜູ້ພິພາກສາ ຂອງສານທະຫານທຸກຂັ້ນ ເພື່ອໃຫ້ປະທານສານປະຊາຊົນສູງສຸດ ສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

7. ສະຫຼຸບ ຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບການເຄື່ອນໄຫວວຽກງານຂອງສານທະຫານ;

8. ຄົ້ນຄວ້າ ຮ່າງບົດລາຍງານ ຂອງປະທານສານທະຫານຂັ້ນສູງ ກ່ຽວກັບການເຄື່ອນໄຫວວຽກງານຂອງສານທະຫານ ຕໍ່ກອງປະຊຸມໃຫຍ່ຜູ້ພິພາກສາ;

9. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ຄະນະປະທານ ອາດຈະເປີດກອງປະຊຸມຂອງຕົນຂຶ້ນຢ່າງໜ້ອຍ ປີລະສາມເທື່ອ.

### ມາດຕາ 28 ຄະນະສານອາຍາຂອງສານທະຫານ

ຄະນະສານອາຍາ ຂອງສານທະຫານຂັ້ນສູງ ແລະ ສານທະຫານພາກ ປະກອບດ້ວຍ ຫົວໜ້າຄະນະສານ, ຮອງຫົວໜ້າ ຄະນະສານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານວິຊາການຈຳນວນໜຶ່ງ.

ສິດ ແລະ ໜ້າທີ່ຂອງຄະນະສານອາຍາ ຂອງສານທະຫານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 29 ກົງຈັກບໍລິຫານ

ເພື່ອຮັບປະກັນການເຄື່ອນໄຫວ ປະຕິບັດໜ້າທີ່ວຽກງານຂອງຕົນ ສານທະຫານແຕ່ລະຂັ້ນມີກົງຈັກບໍລິຫານ ດັ່ງນີ້:

ສານທະຫານຂັ້ນສູງ ມີ ຫ້ອງການບໍລິຫານ, ຫ້ອງການຄຸ້ມຄອງວິຊາການ ແລະ ສະຖິຕິສານ, ຫ້ອງການປະຕິບັດຄຳຕັດສິນຂອງສານ, ຫ້ອງການໂຄສະນາ-ອົບຮົມ ແລະ ຫ້ອງການກວດກາ.

ສານທະຫານພາກ ມີ ພະແນກບໍລິຫານ, ພະແນກຄຸ້ມຄອງວິຊາການ ແລະ ສະຖິຕິສານ, ພະແນກປະຕິບັດຄຳຕັດສິນຂອງສານ, ພະແນກໂຄສະນາ-ອົບຮົມ ແລະ ພະແນກກວດກາ.

ເມື່ອມີຄວາມຮຽກຮ້ອງຕ້ອງການ ຂອງວຽກງານໃນແຕ່ລະໄລຍະ ສານທະຫານຂັ້ນສູງ ແລະ ສານທະຫານພາກ ອາດຈະສ້າງຕັ້ງ ຫຼື ລົບລ້າງ ຫ້ອງການ, ພະແນກ ແລະ ກົງຈັກບໍລິຫານ ອື່ນກໍໄດ້.

ຈຳນວນພົນ ແລະ ການເຄື່ອນໄຫວວຽກງານຂອງກົງຈັກບໍລິຫານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 30 ໂຄງປະກອບບຸກຄະລາກອນ

ສານທະຫານທຸກຂັ້ນ ປະກອບດ້ວຍ ປະທານ, ຮອງປະທານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ, ພະນັກງານວິຊາການ ແລະ ພະນັກງານບໍລິຫານ ຈຳນວນໜຶ່ງ.

## ມາດຕາ 31 ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ

ປະທານສານທະຫານຂັ້ນສູງ ເປັນຮອງປະທານສານປະຊາຊົນສູງສຸດ ໂດຍຕຳແໜ່ງ.

ປະທານສານທະຫານຂັ້ນສູງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມຄຳສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ຮັບຄຳເຫັນດີ ຈາກລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ແລະ ຄະນະປະຈຳສະພາແຫ່ງຊາດ;

ຮອງປະທານສານທະຫານຂັ້ນສູງ, ປະທານ, ຮອງປະທານສານທະຫານພາກ ແລະ ຜູ້ພິພາກສາຂອງສານທະຫານທຸກຂັ້ນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ຮັບຄຳສະເໜີຂອງປະທານສານທະຫານຂັ້ນສູງ ແລະ ຄຳເຫັນດີຈາກລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

## ມາດຕາ 32 ສິດ ແລະ ໜ້າທີ່ ຂອງປະທານສານທະຫານຂັ້ນສູງ

ປະທານສານທະຫານຂັ້ນສູງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນັ່ງເປັນປະທານ ໃນຄະນະສານຕັດສິນ ຂອງສານທະຫານຂັ້ນສູງ;
2. ຊີ້ນຳ-ນຳພາວຽກງານຂອງສານທະຫານທຸກຂັ້ນ, ຮຽກໂຮມກອງປະຊຸມຄະນະປະທານ, ກອງປະຊຸມວິຊາການຂອງສານທະຫານຂັ້ນສູງ ແລະ ສານທະຫານພາກ, ຄຸ້ມຄອງ ແລະ ກວດກາການເຄື່ອນໄຫວວຽກງານຂອງສານທະຫານ;
3. ອອກຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕົກລົງອື່ນ;
4. ປະຕິບັດຄຳແນະນຳ ຂອງປະທານສານປະຊາຊົນສູງສຸດ ກ່ຽວກັບການປະຕິບັດກົດໝາຍ ແລະ ການດຳເນີນຄະດີອາຍາ ເພື່ອໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນກຳລັງປະກອບອາວຸດປ້ອງກັນຊາດ;
5. ຊີ້ນຳວຽກງານຄົ້ນຄວ້າ, ສະເໜີຮ່າງກົດໝາຍ ແລະ ນິຕິກຳອື່ນ ຢູ່ໃນຂົງເຂດສານທະຫານ ແລ້ວສະເໜີຕໍ່ສະພາຜູ້ພິພາກສາ ສານປະຊາຊົນສູງສຸດ ພິຈາລະນາ;
6. ຄົ້ນຄວ້າ ນຳສະເໜີຈຳນວນຜູ້ພິພາກສາ ຂອງສານທະຫານທຸກຂັ້ນ ແລະ ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງປະທານ ແລະ ຜູ້ພິພາກສາຂອງສານທະຫານຂັ້ນສູງ, ປະທານ, ຮອງປະທານ ແລະ ຜູ້ພິພາກສາຂອງສານທະຫານພາກ ເພື່ອໃຫ້ປະທານສານປະຊາຊົນສູງສຸດ ນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ພາຍຫຼັງທີ່ໄດ້ຮັບຄຳເຫັນດີ ຈາກລັດຖະມົນຕີວ່າການກະຊວງປ້ອງກັນປະເທດ;
7. ກຳນົດກົງຈັກບໍລິຫານ ຂອງສານທະຫານຂັ້ນສູງ ແລະ ສານທະຫານພາກ ເພື່ອໃຫ້ປະທານສານປະຊາຊົນສູງສຸດ ພິຈາລະນາ ແລະ ນຳສະເໜີ ຕໍ່ຄະນະປະຈຳສະພາແຫ່ງຊາດ ອະນຸມັດ ພາຍຫຼັງທີ່ໄດ້ຮັບຄຳເຫັນດີ ຈາກລັດຖະມົນຕີວ່າການກະຊວງປ້ອງກັນປະເທດ;
8. ສະເໜີ ຕໍ່ປະທານສານປະຊາຊົນສູງສຸດ ຫຼື ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ເພື່ອແຕ່ງຕັ້ງ, ບັນຈຸ ສັບຊ້ອນ, ປະຕິບັດນະໂຍບາຍ, ຍ້ອງຍໍ, ເລື່ອນຊັ້ນ ແລະ ລົງວິໄນ ພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມແຕ່ລະກໍລະນີ;

9. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານທະຫານ ຕໍ່ກອງປະຊຸມໃຫຍ່ຜູ້ພິພາກສາ, ປະທານສານປະຊາຊົນສູງສຸດ ແລະ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ;

10. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ມາດຕາ 33 ສິດ ແລະ ໜ້າທີ່ຂອງຮອງປະທານສານທະຫານຂັ້ນສູງ

ຮອງປະທານສານທະຫານຂັ້ນສູງ ນັ່ງເປັນປະທານ ໃນຄະນະສານຕັດສິນຂອງສານທະຫານຂັ້ນຂອງຕົນ, ມີໜ້າທີ່ຊ່ວຍປະທານສານທະຫານຂັ້ນສູງ ໃນການປະຕິບັດ ສິດ ແລະ ໜ້າທີ່ຂອງປະທານ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍ ຂອງປະທານສານທະຫານຂັ້ນສູງ.

ໃນກໍລະນີທີ່ປະທານສານທະຫານຂັ້ນສູງ ຕິດຂັດ ແມ່ນ ຮອງປະທານສານທະຫານຂັ້ນສູງ ຜູ້ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

## ມາດຕາ 34 ສິດ ແລະ ໜ້າທີ່ ຂອງປະທານສານທະຫານພາກ

ປະທານສານທະຫານພາກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນັ່ງເປັນປະທານໃນຄະນະສານຕັດສິນ;
2. ຊີ້ນໍາ ນໍາພາການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຂອງສານຂັ້ນຂອງຕົນ;
3. ອອກຄໍາສັ່ງ, ຄໍາຊີ້ຂາດ ແລະ ຄໍາຕົກລົງອື່ນ;
4. ໄດ້ຮັບການບໍາລຸງ, ຍົກລະດັບກ່ຽວກັບວຽກງານ ບໍລິຫານ ແລະ ວິຊາສະເພາະ;
5. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງສານທະຫານຂັ້ນຂອງຕົນ ຕໍ່ປະທານສານທະຫານຂັ້ນສູງ ແລະ ເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ພິພາກສາ;
6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ມາດຕາ 35 ສິດ ແລະ ໜ້າທີ່ ຂອງຮອງປະທານສານທະຫານພາກ

ຮອງປະທານສານທະຫານພາກ ນັ່ງເປັນປະທານ ໃນຄະນະສານຕັດສິນ ຂອງສານທະຫານຂັ້ນຂອງຕົນ, ມີໜ້າທີ່ຊ່ວຍປະທານສານທະຫານພາກ ໃນການປະຕິບັດ ສິດ ແລະ ໜ້າທີ່ຂອງປະທານ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍ ຂອງປະທານສານທະຫານພາກ.

ໃນກໍລະນີທີ່ປະທານສານທະຫານພາກ ຕິດຂັດ ແມ່ນ ຮອງປະທານສານທະຫານພາກ ຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

## ມາດຕາ 36 ສິດ ແລະ ໜ້າທີ່ ຂອງຜູ້ພິພາກສາ

ຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສໍານວນຄະດີ ທີ່ໄດ້ຮັບມອບໝາຍ;
2. ເອົາຄໍາໃຫ້ການ ຂອງຈໍາເລີຍ, ໂຈດທາງແພ່ງ ແລະ ບຸກຄົນອື່ນທີ່ເຂົ້າຮ່ວມໃນການດໍາເນີນຄະດີ;

3. ໄກ່ເກ້ຍຄູ່ຄວາມໃນຄະດີ;

4. ນັ່ງເປັນຄະນະສານຕັດສິນຄະດີ;

5. ໄດ້ຮັບການບຳລຸງ, ຍົກລະດັບທາງດ້ານກົດໝາຍ ແລະ ວຽກງານຜູ້ພິພາກສາ;

6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງຜູ້ຊ່ວຍຜູ້ພິພາກສາ**

ຜູ້ຊ່ວຍຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍຜູ້ພິພາກສາ ໃນການຄົ້ນຄວ້າສຳນວນຄະດີ;
2. ຊ່ວຍຜູ້ພິພາກສາ ໃນການເອົາຄຳໃຫ້ການ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
3. ຊ່ວຍຜູ້ພິພາກສາ ໃນການຂຽນຄຳຕັດສິນ ຫຼື ຄຳພິພາກສາຂອງສານ;
4. ເຂົ້າຮ່ວມໃນການໄກ່ເກ້ຍຄູ່ຄວາມໃນຄະດີ,
5. ໄດ້ຮັບການບຳລຸງ, ຍົກລະດັບທາງດ້ານກົດໝາຍ ແລະ ວຽກງານຊ່ວຍຜູ້ພິພາກສາ;
6. ເລື່ອນເປັນຜູ້ພິພາກສາ ຕາມເງື່ອນໄຂ ແລະ ມາດຕະຖານ ທີ່ໄດ້ກຳນົດໄວ້ໃນລະບຽບການ;
7. ສະຫຼຸບ ລາຍງານຄະດີ ທີ່ຕົນຮັບຜິດຊອບຄົ້ນຄວ້າຕໍ່ຜູ້ພິພາກສາ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 38 ສິດ ແລະ ໜ້າທີ່ ຂອງຈ່າສານ**

ຈ່າສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບສຳນວນຄະດີ ແລະ ຄຳຮ້ອງຕ່າງໆທີ່ພົວພັນກັບຄະດີ, ຄຳຮ້ອງຂໍອຸທອນ, ຄຳຮ້ອງຂໍລົບລ້າງແລ້ວປະກອບໃສ່ສຳນວນຄະດີ, ຈັດລຽງເອກະສານ, ຂຶ້ນຟ້ອງ ແລະ ຂຶ້ນບັນຊີຄະດີ;
2. ອອກໝາຍຮຽກ, ໝາຍເຊີນ ຕາມການແນະນຳຂອງຜູ້ພິພາກສາ;
3. ເຂົ້າຮ່ວມບັນທຶກ ໃນການເອົາຄຳໃຫ້ການ ຫຼື ໃນການໄກ່ເກ້ຍ;
4. ກະກຽມ, ແຈ້ງລະບຽບການ ແລະ ບັນທຶກປຶ້ມປະຊຸມສານໃນທີ່ປະຊຸມສານ;
5. ອະທິບາຍ ຊີ້ແຈງເຫດຜົນໃຫ້ຄູ່ຄວາມໃນຄະດີ ເຂົ້າໃຈກ່ຽວກັບຄຳຕັດສິນ ຫຼື ຄຳພິພາກສາຂອງສານ ພ້ອມທັງແຈ້ງສິດ ໃນການຂໍອຸທອນ ຫຼື ຂໍລົບລ້າງ;
6. ລົງລາຍເຊັນໃສ່ຄຳຕັດສິນ ຫຼື ຄຳພິພາກສາ ແລະ ເອກະສານອື່ນ ຕາມລະບຽບກົດໝາຍ;
7. ຂຶ້ນບັນຊີ, ເກັບມ້ຽນຂອງກາງຄະດີ ແລະ ຄຸ້ມຄອງເງິນຄ່າທຳນຽມສານຕາມລະບຽບກົດໝາຍ, ສະຫຼຸບສະຖິຕິຄະດີ, ສົ່ງຄຳຕັດສິນ ແລະ ຄຳພິພາກສາ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;
8. ໄດ້ຮັບການບຳລຸງ, ຍົກລະດັບທາງດ້ານກົດໝາຍ ແລະ ວຽກງານຈ່າສານ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ.

# ພາກທີ IV

# ຜູ້ພິພາກສາຂອງສານທະຫານ

## ໝວດທີ 1

## ມາດຕະຖານຂອງຜູ້ພິພາກສາ

**ມາດຕາ 39  ຜູ້ພິພາກສາ**

ຜູ້ພິພາກສາ ແມ່ນ ຜູ້ທີ່ມີມາດຕະຖານ ແລະ ໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດ ຈຶ່ງມີສິດພິຈາລະນາຕັດສິນ ຫຼື ພິພາກສາຄະດີ.

ມີແຕ່ຜູ້ພິພາກສາ ທີ່ໄດ້ຮັບການແຕ່ງຕັ້ງຕາມກົດໝາຍເທົ່ານັ້ນ ຈຶ່ງສາມາດປະກອບເຂົ້າເປັນຄະນະສານຕັດສິນ.

**ມາດຕາ 40  ມາດຕະຖານຂອງຜູ້ພິພາກສາ**

ຜູ້ພິພາກສາຂອງສານທະຫານ ມີ ມາດຕະຖານ ດັ່ງນີ້:

1. ເປັນນາຍທະຫານ ຂອງກອງທັບປະຊາຊົນລາວແຕ່ຊັ້ນຮ້ອຍເອກ ແລະ ມີອາຍຸແຕ່ຊາວຫ້າປີ ຂຶ້ນໄປ;
2. ເປັນຜູ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດ ສິນທຳປະຕິວັດ, ມີນ້ຳໃຈບໍລິສຸດ, ປອດໃສ, ມີຈັນຍາທຳ, ມີແບບແຜນການນຳພາ-ບັນຊາດີ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ຮັບໃຊ້ຜົນປະໂຫຍດຂອງກອງທັບ;
3. ເປັນຜູ້ມີລະດັບການສຶກສາດ້ານກົດໝາຍ ແຕ່ຊັ້ນສູງຂຶ້ນໄປ ແລະ ໄດ້ຜ່ານການຝຶກອົບຮົມຫຼັກສູດສຳລັບຜູ້ພິພາກສາ, ຜ່ານການກໍ່ສ້າງ ຫຼື ບຳລຸງທິດສະດີການເມືອງ-ການປົກຄອງຕາມຫຼັກສູດຊັ້ນຕົ້ນຂຶ້ນໄປ, ຮູ້ພາສາຕ່າງປະເທດໃດໜຶ່ງ;
4. ບໍ່ເຄີຍຖືກລົງວິໄນ ຫຼື ຖືກລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;
5. ເປັນຜູ້ມີສຸຂະພາບດີ.

ສຳລັບມາດຕະຖານຂອງຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ກອງປະຊຸມວິຊາການ

**ມາດຕາ 41 ທີ່ຕັ້ງ ແລະ ພາລະບົດບາດ ຂອງກອງປະຊຸມວິຊາການ**

ກອງປະຊຸມວິຊາການ ແມ່ນ ການຈັດຕັ້ງສູງສຸດທາງດ້ານວິຊາການຂອງສານທະຫານ, ມີພາລະບົດບາດຊີ້ນຳ ສານທະຫານ ໃນການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນກຳລັງປະກອບອາວຸດປ້ອງກັນຊາດ.

ກອງປະຊຸມວິຊາການ ປະກອບດ້ວຍ ປະທານ, ຮອງປະທານ, ຫົວໜ້າຄະນະສານ ແລະ ຜູ້ພິພາກສາທັງໝົດຂອງສານທະຫານທຸກຂັ້ນ. ນອກຈາກນີ້ ອາດຈະເຊີນ ຄະນະນຳ, ຂະແໜງການອື່ນ ທີ່ກ່ຽວຂ້ອງເຂົ້າຮ່ວມນຳ. ບຸກຄົນທີ່ຖືກເຊີນເຂົ້າຮ່ວມນັ້ນ ມີສິດສະເໜີຄຳຄິດຄຳເຫັນ ແຕ່ບໍ່ມີສິດລົງຄະແນນສຽງ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງກອງປະຊຸມວິຊາການ**

ກອງປະຊຸມວິຊາການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງບົດລາຍງານ ຂອງປະທານສານທະຫານຂັ້ນສູງ ກ່ຽວກັບການປະຕິບັດວຽກງານ ແລະ ທິດທາງ ແຜນການໃນຕໍ່ໜ້າຂອງສານທະຫານ;
2. ສັງລວມ, ຕີລາຄາ ສະຖິຕິສານ, ການປະຕິບັດວຽກງານ ແລະ ການນຳໃຊ້ກົດໝາຍຂອງສານທະຫານ;
3. ກວດກາຄືນ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນອື່ນ ຂອງສານທະຫານທຸກຂັ້ນທີ່ຜິດພາດ ເພື່ອແນະນຳໃຫ້ສານ ທີ່ມີສິດອຳນາດກ່ຽວຂ້ອງແກ້ໄຂ ໃຫ້ສອດຄ່ອງກັບລະບຽບກົດໝາຍ;
4. ອອກຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍຂອງສານທະຫານ;
5. ກຳນົດທິດທາງການປັບປຸງການຈັດຕັ້ງຂອງສານທະຫານ;
6. ພິຈາລະນາບັນຫາອື່ນ ທີ່ສຳຄັນຊຶ່ງພົວພັນກັບວຽກງານຂອງສານທະຫານ.

**ມາດຕາ 43 ການຮຽກໂຮມກອງປະຊຸມວິຊາການ**

ກອງປະຊຸມວິຊາການ ເປີດຂຶ້ນຢ່າງໜ້ອຍສອງປີຕໍ່ເທື່ອ ໂດຍການຮຽກໂຮມຂອງປະທານສານທະຫານຂັ້ນສູງ.

ກອງປະຊຸມວິຊາການ ຈະດຳເນີນໄດ້ ກໍຕໍ່ເມື່ອທາກມີສະມາຊິກເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມຂອງຈຳນວນສະມາຊິກທັງໝົດ.

ມະຕິຂອງກອງປະຊຸມວິຊາການ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ.

# ພາກທີ V
# ລະບອບແບບແຜນວິທີເຮັດວຽກຂອງສານທະຫານ

**ມາດຕາ 44 ລະບອບເຮັດວຽກ**

ສານທະຫານຂັ້ນສູງ ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ບໍລິຫານ, ຊີ້ນໍາການເຄື່ອນໄຫວປະຕິບັດໜ້າທີ່ ແລະ ກວດກາ ວຽກງານທາງດ້ານວິຊາການ ຂອງສານທະຫານພາກ.

ການເຮັດວຽກຂອງສານທະຫານ ຕ້ອງດໍາເນີນບົນພື້ນຖານເຮັດວຽກເປັນໝູ່ຄະນະ, ເຄົາລົບຄວາມເປັນເອກະລາດຂອງຜູ້ພິພາກສາ ໃຫ້ສອດຄ່ອງກັບກົດໝາຍ ເພື່ອຮັບປະກັນການຕັດສີນ ແລະ ການພິພາກສາຄະດີ ໃຫ້ມີຄວາມຖືກຕ້ອງ ແລະ ຍຸຕິທໍາ.

ສານທະຫານ ປະຕິບັດໜ້າທີ່ບົນພື້ນຖານຫຼັກການນິຕິທໍາ.

**ມາດຕາ 45 ແບບແຜນວິທີເຮັດວຽກ**

ສານທະຫານ ປະຕິບັດໜ້າທີ່ວຽກງານເປັນໝູ່ຄະນະ ໂດຍມີການແບ່ງງານ, ແບ່ງຄວາມຮັບຜິດຊອບ ເຮັດວຽກຢ່າງມີແຜນການ, ກວດກາ, ສະຫຼຸບ, ປະເມີນຜົນ, ຖອດຖອນບົດຮຽນ, ລາຍງານ, ຂໍຄໍາເຫັນຊີ້ນໍາຈາກຂັ້ນເທິງຂອງຕົນ, ປະສານສົມທົບກັບພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 46 ການເຂົ້າຮ່ວມ ແລະ ການຕິດຕາມກວດກາ ຂອງອົງການໄອຍະການທະຫານ ໃນການດໍາເນີນຄະດີ ຂອງສານທະຫານ**

ໄອຍະການທະຫານ ເຂົ້າຮ່ວມໃນການດໍາເນີນຄະດີ, ຖະແຫຼງ ຢູ່ທີ່ປະຊຸມສານ ແລະ ຕິດຕາມກວດກາການປະຕິບັດກົດໝາຍ ຂອງສານທະຫານ ຕາມລະບຽບການ ແລະ ໃນຂອບເຂດທີ່ກົດໝາຍໄດ້ກໍານົດໄວ້.

**ມາດຕາ 47 ການເຂົ້າຮ່ວມຂອງກົມກອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ໃນການດໍາເນີນຄະດີຂອງສານທະຫານ**

ຜູ້ຕາງໜ້າກົມກອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ເຂົ້າຮ່ວມໃນການດໍາເນີນຄະດີທີ່ກ່ຽວຂ້ອງ ຕາມການສະເໜີຂອງສານທະຫານ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຄູ່ຄວາມ ຫຼື ບຸກຄົນ ທີ່ຢູ່ໃນການຄຸ້ມຄອງຂອງຕົນດ້ວຍການຊີ້ແຈງ, ໃຫ້ຂໍ້ມູນ, ອະທິບາຍ ແລະ ໃຫ້ເຫດຜົນກ່ຽວກັບຄະດີ.

# ພາກທີ VI
# ຂໍ້ຫ້າມ

## ມາດຕາ 48 ຂໍ້ຫ້າມສຳລັບພະນັກງານສານທະຫານ

ຫ້າມ ພະນັກງານສານທະຫານ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ, ສິດອຳນາດ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
2. ບັງຄັບ ນາບຂູ່, ປະຕິບັດສິດ, ໜ້າທີ່ເກີນຂອບເຂດ ແລະ ລະເມີດລະບຽບກົດໝາຍ ກ່ຽວກັບການດຳເນີນຄະດີ;
3. ລຳອຽງ ຫຼື ເຂົ້າຂ້າງອອກຂາ ທີ່ພາໃຫ້ເກີດມີການຕັດສິນ ຫຼື ພິພາກສາຄະດີ ຜິດພາດ;
4. ກັກສຳນວນຄະດີ, ກົດໜ່ວງຖ່ວງດຶງເອກະສານ ເພື່ອຫາຜົນປະໂຫຍດຈາກການດຳເນີນຄະດີ;
5. ເປີດເຜີຍຄວາມລັບ ກ່ອນການຕັດສິນຄະດີ ເພື່ອຫາຜົນປະໂຫຍດໃດໜຶ່ງ;
6. ທວງ, ຮຽກ, ຮັບເອົາສິນບົນຈາກຄູ່ຄວາມ;
7. ເປັນທີ່ປຶກສາທາງດ້ານກົດໝາຍ, ພົວພັນກັບຄູ່ຄວາມ ເພື່ອຫາຜົນປະໂຫຍດຈາກຄະດີ.
8. ປົດບັງ, ຊຸກເຊື່ອງ ເອກະສານ, ຫຼັກຖານທີ່ມີຢູ່ໃນສຳນວນຄະດີ ແລະ ຂອງກາງຄະດີ;
9. ມີພຶດຕິກຳອື່ນ ທີ່ຜິດຕໍ່ຈັນຍາທຳ ແລະ ເປັນການລະເມີດລະບຽບກົດໝາຍ.

## ມາດຕາ 49 ຂໍ້ຫ້າມສຳລັບຜູ້ເຂົ້າຮ່ວມ ໃນການດຳເນີນຄະດີ

ຫ້າມ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ມີ ພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ບັງຄັບ, ນາບຂູ່ ພະນັກງານສານທະຫານ ແລະ ຜູ້ເຂົ້າຮ່ວມອື່ນ ໃນການດຳເນີນຄະດີ;
2. ລາຍງານ, ສະໜອງຂໍ້ມູນ, ເອກະສານ ບໍ່ຖືກກັບຄວາມຈິງ, ຊຸກເຊື່ອງ, ທຳລາຍຂໍ້ມູນ, ເອກະສານ, ຫຼັກຖານທີ່ມີຢູ່ໃນສຳນວນຄະດີ ແລະ ຂອງກາງຄະດີ;
3. ຫຼົບຫຼີກ ຈາກການດຳເນີນຄະດີ;
4. ແຊກແຊງ, ຊີ້ນຳການດຳເນີນຄະດີ;
5. ໃຫ້ສິນບົນ ພະນັກງານທີ່ດຳເນີນຄະດີ;
6. ໝິ່ນປະໝາດ, ປ້ອຍດ່າ, ນິນທາ, ໃສ່ຮ້າຍ ພະນັກງານສານທະຫານ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

### ມາດຕາ 50 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ຍົກຍ້າຍຜູ້ພິພາກສາຂອງສານທະຫານ ໂດຍບໍ່ມີມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;
2. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງການດຳເນີນການຕັດສິນ ແລະ ພິພາກສາຄະດີ;
3. ນາບຂູ່, ທຳຮ້າຍ ພະນັກງານສານທະຫານ;
4. ໝິ່ນປະໝາດ, ປ້ອຍດ່າ, ນິນທາ, ໃສ່ຮ້າຍ ພະນັກງານສານທະຫານ;
5. ປິດບັງ, ເຊື່ອງອຳ, ທຳລາຍຫຼັກຖານ, ຂອງກາງ ທີ່ກ່ຽວຂ້ອງໃນຄະດີ ແລະ ຜູ້ກະທຳຜິດ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ VII
## ວັນສ້າງຕັ້ງ, ງົບປະມານ, ເຄື່ອງໝາຍ
## ກາໝາຍ, ບັດຜູ້ພິພາກສາ ແລະ ຕາປະທັບ

### ມາດຕາ 51 ວັນສ້າງຕັ້ງສານທະຫານ

ວັນສ້າງຕັ້ງສານທະຫານ ແມ່ນ ວັນທີ 13 ກໍລະກົດ 1982. ໃນແຕ່ລະປີ ທັງສູນກາງ ແລະ ທ້ອງຖິ່ນ ຕ້ອງຈັດຕັ້ງ ສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການຕ່າງໆທີ່ເໝາະສົມ.

### ມາດຕາ 52 ງົບປະມານຂອງສານທະຫານ

ງົບປະມານຂອງສານທະຫານ ແມ່ນ ສານທະຫານຂັ້ນສູງເປັນຜູ້ສ້າງແຜນງົບປະມານລວມ ໂດຍຜ່ານກະຊວງປ້ອງກັນປະເທດ ເພື່ອນຳສະເໜີຕໍ່ລັດຖະບານ ພິຈາລະນາ.

### ມາດຕາ 53 ເຄື່ອງໝາຍ, ກາໝາຍ ແລະ ບັດຜູ້ພິພາກສາ

ເຄື່ອງໝາຍ, ກາໝາຍຂອງພະນັກງານສານທະຫານ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງ ຕາມການສະເໜີ ຂອງປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ຮັບຄຳສະເໜີຂອງ ປະທານສານທະຫານຂັ້ນສູງ ແລະ ຄຳເຫັນດີ ຂອງລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

ບັດຜູ້ພິພາກສາ ແມ່ນ ປະທານສານປະຊາຊົນສູງສຸດເປັນຜູ້ອອກໃຫ້.

**ມາດຕາ 54 ຕາປະທັບຂອງສານທະຫານ**

ຕາປະທັບ ຂອງປະທານ, ຄະນະປະທານ ແລະ ຄະນະສານອາຍາຂອງສານທະຫານ ແຕ່ລະຂັ້ນກຳນົດ ດັ່ງນີ້:

ຕາປະທັບຂອງປະທານສານທະຫານ ເປັນຮູບວົງມົນ ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນ ຢູ່ຂອບເທິງວົງມົນ ຂຽນຊື່ສານທະຫານຂັ້ນຂອງຕົນ, ເບື້ອງລຸ່ມຂຽນວ່າປະທານ ຊຶ່ງຂັ້ນດ້ວຍ ດາວຫ້າແຈ.

ຕາປະທັບຂອງຄະນະປະທານສານທະຫານ ເປັນຮູບວົງມົນ ຢູ່ ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ຂອບເທິງວົງມົນ ຂຽນຊື່ສານທະຫານຂັ້ນສູງ, ເບື້ອງລຸ່ມຂຽນວ່າຄະນະປະທານ ຊຶ່ງຂັ້ນດ້ວຍ ດາວຫ້າແຈ.

ຕາປະທັບຂອງຄະນະສານອາຍາ ເປັນຮູບວົງມົນ ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນ ຢູ່ຂອບເທິງວົງມົນ ຂຽນຊື່ສານທະຫານຂັ້ນຂອງຕົນ, ເບື້ອງລຸ່ມຂຽນວ່າຄະນະສານອາຍາ ຊຶ່ງຂັ້ນ ດ້ວຍ ດາວຫ້າແຈ.

ຕາປະທັບຂອງຈ່າສານ ເປັນຮູບວົງມົນ ຢູ່ກາງວົງມົນຂຽນວ່າ ຈ່າສານ ເນື້ອໃນຢູ່ຂອບເທິງວົງມົນ ຂຽນຊື່ສານທະຫານຂັ້ນຂອງຕົນ, ເບື້ອງລຸ່ມຂຽນວ່າຄະນະສານອາຍາ ຊຶ່ງຂັ້ນດ້ວຍ ດາວຫ້າແຈ.

ຕາປະທັບຂອງກົງຈັກບໍລິຫານຂອງສານທະຫານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 55 ນະໂຍບາຍຕໍ່ຜູ້ມີຜົນງານ**

ພະນັກງານສານທະຫານ ເປັນຕົ້ນ ຜູ້ພິພາກສາ ທີ່ໄດ້ປະຕິບັດກົດໝາຍສະບັບນີ້ ຢ່າງເຂັ້ມງວດ ເຊັ່ນ ຕັດສິນ ຫຼື ພິພາກສາຄະດີ ມີຄວາມຖືກຕ້ອງ, ວ່ອງໄວ, ຍຸຕິທຳ ແລະ ຕັ້ງໜ້າພັດທະນາລະບົບການຈັດຕັ້ງຂອງສານທະຫານ ໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ທັນສະໄໝ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ໄດ້ປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການໃຫ້ຄວາມຮ່ວມມືຕໍ່ການດຳເນີນຄະດີ ແລະ ພັດທະນາລະບົບການຈັດຕັ້ງຂອງສານທະຫານ ກໍຈະໄດ້ຮັບນະໂຍບາຍເຊັ່ນດຽວກັນ.

**ມາດຕາ 56 ມາດຕະການຕໍ່ຜູ້ລະເມີດ**

ພະນັກງານສານທະຫານ, ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ໄດ້ສ້າງຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ກອງທັບ, ສັງຄົມ, ກຽດສັກສີ, ຊື່ສຽງ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ,

ດຳເນີນຄະດີ ຕາມລະບຽບກົດໝາຍ ຕາມແຕ່ກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 57 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສານປະຊາຊົນສູງສຸດ ແລະ ສານທະຫານ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍ ສະບັບນີ້.

**ມາດຕາ 58 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້